


ALLIANZ INSURANCE LAOS

# ຊ່າງສ້ອມແປງ — ພະແນກຊັບສິນ (ສັນຍາຊົ່ວຄາວ 1 ປີ)

**ສະຖານທີ່**
ນະຄອນຫລວງວຽງຈັນ

**ລະດັບການສຶກສາ**
ຈົບການຊ່າງ ຫຼືຊັ້ນສູງສາຂາໄຟຟ້າ, ກົນຈັກ, ຫຼື ສາຂາທີ່ກ່ຽວຂ້ອງ.

## ໜ້າທີ່ຮັບຜິດຊອບ

1. **ລະບົບໄຟຟ້າ**
   - ຕິດຕັ້ງ ແລະສ້ອມແປງໄຟຟ້າພາຍໃນອາຄານ ເປັນຕົ້ນແມ່ນແລ່ນໄຟໃນຫ້ອງການ, ປ່ຽນດອກໄຟ ແລະອຸປະກອນໄຟຟ້າຕ່າງໆ.
   - ຕິດຕາມ ແລະບັນທຶກການກວດສອບ - ສ້ອມແປງລະບົບໄຟອາລາມ, ລະບົບປ້ອງກັນນໍ້າຖ້ວມ ແລະລະບົບກ້ອງ CCTV ຂອງຜູ່ຮັບເໝົາ.
   - ດຶງສາຍແລນ (ສາຍອິນເຕີເນັດ) ໃຫ້ພະແນກໄອທີ ໃນກໍລະນີທີ່ມີການປັບປຸງລະບົບເຄືອຂ່າຍພາຍໃນ.
   - ຕິດຕາມ ແລະບັນທຶກການກວດສອບ - ສ້ອມແປງລິບປະຈໍາເດືອນຂອງຜູ່ຮັບເໝົາ.
   - ຈົດບັນທຶກການໃຊ້ໄຟຟ້າປະຈໍາເດືອນພາຍໃນອາຄານ.
   - ກວດສອບ ແລະບັນທຶກຈັກປັ່ນໄຟເປັນປະຈໍາທຸກໆເດືອນ.
2. **ລະບົບນໍ້າດີ - ນໍ້າເສຍ**
   - ຕິດຕັ້ງ ແລະສ້ອມແປງລະບົບທໍ່ປະປາພາຍໃນອາຄານ.
   - ຕິດຕັ້ງ ແລະສ້ອມແປງລະບົບທໍ່ນໍ້າເສຍພາຍໃນອາຄານ.
   - ຕິດຕັ້ງ ແລະສ້ອມແປງເຄື່ອງສຸຂະພັນຕ່າງໆໃນອາຄານ ເປັນຕົ້ນແມ່ນ ກ໊ອກນໍ້າ, ສາຍສີດຊໍາລະ, ຝາຊັກໂຄກ...
3. **ວຽກບໍາລຸງຮັກສາອຸປະກອນ ແລະເຄື່ອງມືຕ່າງໆ**
   - ເກັບມ້ຽນອຸປະກອນ ແລະເຄື່ອງມືຕ່າງໆຢ່າງເປັນລະບົບ, ມີການກວດສອບ - ບໍາລຸງຮັກສາເປັນປະຈໍາ ແລ້ວລາຍງານຕໍ່ຜູ່ຮັບຜິດຊອບ.
   - ການເບີກອຸປະກອນ ແລະເຄື່ອງມືທີ່ທຸກຄັ້ງຕ້ອງມີການບັນທຶກໄວ້ເປັນລາຍລັກອັກສອນ ເພື່ອປ້ອງກັນການຕົກເຮ່ຍເສຍຫາຍ.
4. **ລະບົບເຄື່ອງປັບອາກາດ**
   - ກວດສອບ ແລະແກ້ໄຂບັນຫາພື້ນຖານຂອງລະບົບເຄື່ອງປັບອາກາດພາຍໃນອາຄານ.
   - ຕິດຕາມ ແລະບັນທຶກລາຍລະອຽດການຕິດຕັ້ງ ແລະສ້ອມແປງເຄື່ອງປັບອາກາດພາຍໃນອາຄານກັບຜູ່ຮັບເໝົາທຸກໆຄັ້ງ.
   - ບໍາລຸງຮັກສາລະບົບເຄື່ອງປັບອາກາດຕາມແຜນກໍານົດຂອງຫົວໜ້າໜ່ວຍງານ.
5. **ລະບົບດັບເພີງ**
   - ກວດສອບ ແລະບໍາລຸງຮັກອຸປະກອນຕ່າງໆ ເຊັ່ນ: ປໍ້າດັບເພີງ, ຕູ້ດັບເພີງ, ບັ້ງດັບເພີງ ຕາມແຜນທີ່ໄດ້ກໍານົດ.
   - ເປັນສ່ວນສໍາຄັນໃນການຝຶກຊ້ອມການຊ້ອມໜີອັກຄີໄພປະຈໍາປີ.
   - ຕິດຕາມ ແລະບັນທຶກການກວດສອບລະບົບປໍ້າດັບເພີງປະຈໍາປີຂອງຕໍາຫຼວດດັບເພີງນະຄອນຫຼວງ.
6. **ວຽກການຕົບແຕ່ງພາຍໃນອາຄານ**
   - ຕິດຕັ້ງ ແລະສ້ອມແປງພື້ນກະໂລ່, ວຽກປູນ, ວຽກໄມ້ ແລະອື່ນໆທີ່ຈໍາເປັນ.
   - ຕິດຕັ້ງ ແລະສ້ອມແປງເພດານພາຍໃນອາຄານ.
   - ຕິດຕັ້ງຝາກັ້ນຫ້ອງພາຍໃນອາຄານ.
   - ຕິດຕັ້ງ ແລະສ້ອມແປງປະຕູ ເຂົ້າ-ອອກພາຍໃນອາຄານ.
   - ທາສີພາຍໃນ ແລະພາຍນອກອາຄານ

## ສິດທິປະໂຫຍດຫລັກ/ສິ່ງທີ່ທ່ານຈະໄດ້ຮັບ

ບໍລິສັດ Allianz Insurance Laos ຂອງພວກເຮົາ ມອບຄວາມຢືດຢຸ່ນໃນການເຮັດວຽກ, ກິດຈະກຳນອກເວລາວຽກງານ ແລະ ສະພາບແວດລ້ອມການຮຽນຮູ້ ແລະ ຄວາມເຕີບໂຕ ເພື່ອສະໜັບສະໜູນເສັ້ນທາງອາຊີບ ແລະ ການພັດທະນາສັກກະຍະພາບຂອງທ່ານ.

ພວກເຮົາສະໜັບສະໜູນພະນັກງານໃນດ້ານຄວາມຫຼາກຫຼາຍ ແລະ ພູມໃຈທີ່ເປັນນາຍຈ້າງທີ່ໃຫ້ໂອກາດທຸກຄົນຢ່າງເທົ່າທຽມກັນ. ພວກເຮົາສະໜັບສະໜູນໃຫ້ທ່ານສະແດງຄວາມເປັນຕົວເອງໄດ້ຢ່າງເຕັມທີ່ບໍ່ວ່າທ່ານຈະມີພູມຫຼັງແບບໃດ, ບຸກຄະລິກກະພາບເປັນແບບໃດ, ຫລື ສັດທາໃນສິ່ງໃດກໍ່ຕາມ. ຄຸນຄ່າພາຍໃນຂອງທ່ານຢູ່ເໜືອສິ່ງພາຍນອກ. ມາເຮັດວຽກດ້ວຍການເປັນໂຕຂອງທ່ານທີ່ສຸດ.

## ເງື່ອນໄຂການສະຫມັກ

- ຈົບການຊ່າງ ຫຼືຊັ້ນສູງສາຂາໄຟຟ້າ, ກົນຈັກ, ຫຼື ສາຂາທີ່ກ່ຽວຂ້ອງ.
- ມີປະສົບການເຮັດວຽກຢ່າງນ້ອຍ 2 ປີຂຶ້ນໄປ.
- ມີຈິດສຳນຶກທີ່ດີໃນວຽກງານບໍລິການ ແລະ ສາມາດເຮັດວຽກພາຍໃຕ້ຄວາມກົດດັນໄດ້ດີ.
- ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.
- ມີຄວາມຊື່ສັດຕໍ່ອົງກອນ ແລະ ຜູ້ອື່ນ.
- ເຮັດວຽກເປັນທີມໄດ້.
- ຖ້າສາມາດໃຊ້ຄອມພິວເຕີພື້ນຖານໄດ້ຈະພິຈາລະນາເປັນພິເສດ.

**Apply now**

ຜູ້ທີ່ສົນໃຈສະໝັກ ເອກະສານປະກອບມີ ຊີວະປະຫວັດ, ຟອມສະຫມັກບໍລິສັດ ແລະ ສົ່ງມາທີ່ **recruitment@agl-allianz.com**

**Tel: (21) 215903, Ext: 303**

→ www.azlaos.com/en_LA/career.html

Join Allianz. Let’s care for tomorrow.